ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ 0035 /ກວຕ.

ນະຄອນຫຼວງວຽງຈັນ, ວັນທີ 20 JAN 2021

# ຂໍ້ຕົກລົງ
# ວ່າດ້ວຍແບບອຸດສາຫະກໍາ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມຊັບສິນທາງປັນຍາ ສະບັບເລກທີ 218/ກວຕ.ກຊປ, ລົງວັນທີ 13 ມັງກອນ 2021.

## ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກໍາ ເປັນຕົ້ນ ການຈົດທະບຽນ, ການດໍາເນີນຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອີງການຄຸ້ມຄອງວຽກງານແບບອຸດສາຫະກໍາ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບແບບອຸດສາຫະກໍາ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ແບບອຸດສາຫະກໍາ**

ແບບອຸດສາຫະກໍາ ແມ່ນຮູບແບບ ຫຼືຮູບຮ່າງ ຫຼື ຮູບຊົງພາຍນອກ ຂອງຜະລິດຕະພັນທີ່ສ້າງຂຶ້ນໃໝ່ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກທີ່ປະກອບດ້ວຍ ຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ຫຼື ເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນໍາເອົາແບບໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸເອງ ເກີດມີຮູບຊົງພາຍນອກພິເສດ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບ ທີ່ນໍາໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ, ດັດແກ້, ຂໍຍົກເລີກບາງສ່ວນ ຫຼື ທັງໝົດ, ລຶບລ້າງການຈົດທະບຽນແບບອຸດສາຫະກໍາ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;

2. **ຄໍາຮ້ອງ** ໝາຍເຖິງສໍານວນເອກະສານການຍື່ນຄໍາຮ້ອງ ຂໍຈົດທະບຽນແບບອຸດສາຫະກໍາ, ດັດແກ້, ຍົກເລີກບາງສ່ວນ ຫຼື ທັງໝົດ;
3. **ຜູ້ຄັດຄ້ານ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານການ ຂໍຈົດທະບຽນແບບອຸດສາຫະກໍາ;
4. **ການຄັດຄ້ານ** ໝາຍເຖິງບຸກຄົນທີສາມທີ່ໄດ້ລະບຸໄວ້ໃນຂໍ້ 3 ຂ້າງເທິງນີ້ ທີ່ໄດ້ຍື່ນຄໍາສະເໜີຂໍຄັດຄ້ານການຂໍຈົດທະບຽນແບບອຸດສາຫະກໍາ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ;
5. **ການຍົກເລີກ** ໝາຍເຖິງການຍື່ນຄໍາຮ້ອງຂໍຍົກເລີກການຈົດທະບຽນແບບອຸດສາຫະກໍາ ບາງສ່ວນຫຼືທັງໝົດໂດຍເຈົ້າຂອງເອງ ຫຼື ບຸກຄົນທີສາມ ທີ່ຍື່ນຄໍາຮ້ອງຂໍຍົກເລີກການຈົດທະບຽນແບບອຸດສາຫະກໍາບາງສ່ວນ ຫຼື ທັງໝົດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ;
6. **ການລົບລ້າງ** ໝາຍເຖິງບຸກຄົນທີສາມ ທີ່ຍື່ນຄໍາສະເໜີຂໍລົບລ້າງການຈົດທະບຽນແບບອຸດສາຫະກໍາທັງໝົດ;
7. **ໝວດ** ໝາຍເຖິງການຈັດໝວດຂອງສາກົນ ກ່ຽວກັບປະເພດຂອງແບບອຸດສາຫະກໍາ ຕາມການຈັດໝວດໂລກາໂນ (LocarnoClassification) ສໍາລັບການຈົດທະບຽນແບບອຸດສາຫະກໍາ;
8. **ນັກອອກແບບ** ໝາຍເຖິງບຸກຄົນ ຫຼື ກຸ່ມຄົນ ທີ່ຮ່ວມກັນອອກແບບຜະລິດຕະພັນໃດໜຶ່ງ;
9. **ການໂອນສິດ** ໝາຍເຖິງການໂອນສິດບາງສ່ວນ ຫຼື ທັງໝົດ ຂອງເຈົ້າຂອງແບບອຸດສາຫະກໍາ ໃຫ້ແກ່ຜູ້ຮັບສິດ;
10. **ການແຍກຄໍາຮ້ອງ** ໝາຍເຖິງ ຜູ້ຮ້ອງຂໍໄດ້ແຍກຄໍາຮ້ອງດຽວອອກເປັນສອງ ຫຼື ຫຼາຍສະບັບ ຊຶ່ງແຕ່ລະຄໍາຮ້ອງທີ່ໄດ້ແຍກມານັ້ນຕ້ອງກ່ຽວຂ້ອງກັບແບບອຸດສາຫະກໍາ ທີ່ຢູ່ໃນຄໍາຮ້ອງຕົ້ນສະບັບ;
11. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍຕໍ່ກັບແບບອຸດສາຫະກໍາ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;
12. **ການອະນຸຍາດນໍາໃຊ້** ໝາຍເຖິງການຕົກລົງຂອງເຈົ້າຂອງສິດໃຫ້ຜູ້ອື່ນນໍາໃຊ້ສິດ ຕໍ່ກັບແບບອຸດສາຫະກໍາຂອງຕົນ ເພື່ອນໍາໃຊ້ສະເພາະແຕ່ພຽງຜູ້ດຽວລວມທັງການຕົກລົງບໍ່ໃຫ້ດໍາເນີນການທາງດ້ານກົດໝາຍ ຕໍ່ຜູ້ໄດ້ຮັບອະນຸຍາດນໍາໃຊ້ດັ່ງກ່າວ ຖ້າປະຕິບັດຕາມເງື່ອນໄຂຂອງການຕົກລົງ;
13. **ຜູ້ອະນຸຍາດນໍາໃຊ້** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອອກໃບອະນຸຍາດນໍາໃຊ້ສິດຕໍ່ກັບແບບອຸດສາຫະກໍາ;
14. **ຜູ້ໄດ້ຮັບອະນຸຍາດນໍາໃຊ້** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນໍາໃຊ້ຈາກເຈົ້າຂອງສິດຕໍ່ກັບແບບອຸດສາຫະກໍາ;
15. **ໃບມອບສິດ** ໝາຍເຖິງເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ;
16. **ຜູ້ມອບສິດ** ໝາຍເຖິງເຈົ້າຂອງແບບອຸດສາຫະກໍາ ທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫຼື ດໍາເນີນການອື່ນນໍາກົມຊັບສິນທາງປັນຍາ;
17. **ຜູ້ຕາງໜ້າ** ໝາຍເຖິງທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງແບບອຸດສາຫະກໍາ ໃນການຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫຼື ດໍາເນີນການອື່ນ ນໍາກົມຊັບສິນທາງປັນຍາ.